DEVELOPMENTAL DISABILITIES ADMINISTRATION (DDA)

# ລະບຽບການຂອງການສັງເກດເບິ່ງຜິວໜັງ
## Skin Observation Protocols

**Client's Name and Address**

**Client Representative's Name and Address**

ມາຍັງ ,

ຂ້າພະເຈົ້າໄດ້ເຮັດແລ້ວໃນໝໍ່ໆມານີ້ການປະເມີນຜົນເບິ່ງຄວາມຕ້ອງການໃນການປິ່ນປົວ ແລະ ການບໍລິການຂອງທ່ານໂດຍການໃຊ້ເຄື່ອງມືວັດແທກການຕີຣາຄາການປະເມີນຜົນ ແລະ ການລາຍງານອັນຄົບຖ້ວນຂອງພະແນກ DDA (CARE). ໃນຂະນະທີ່ເຮັດການຕີຣາຄາປະເມີນຜົນຂອງທ່ານໃຫ້ແລ້ວ, ແລະ ອີງຕາມລາຍລະອຽດທີ່ຖືກເອົາໃຫ້ຂ້າພະເຈົ້າໂດຍທ່ານເອງ, ຜູ້ໃຫ້ການເບິ່ງແຍງດູແລຂອງທ່ານ, ປະວັດພະຍາບານຂອງທ່ານ, ແລະ ຂໍ€ມູນການສ່ຽງອັນຕະລາຍອື່ນໆ, ພວກເຮົາເອົາລາຍລະອຽດໃຫ້ເພື່ອຈະຊ່ວຍເຫລືອທ່ານໃຫ້ໄດ້ຮັບການເບິ່ງແຍງດູແລທີ່ດີກວ່າເກົ່າສຳລັບຕົວທ່ານເອງ, ລວມທັງສິດສອນ ແລະ ແຈ້ງບອກຜູ້ໃຫ້ການເບິ່ງແຍງດູແລ, ແລະ ຜູ້ໃຫ້ການປິ່ນປົວສຸຂະພາບຄົນອື່ນຜູ້ທີ່ອາດຈະຊ່ວຍເຫລືອທ່ານ.

ການປະເມີນຜົນຂອງພະແນກ DDA CARE ຂອງທ່ານໄດ້ພົບເຫັນວ່າທ່ານຢູ່ໃນອັນຕະລາຍຂອງການປ່ຽນແປງຢູ່ໃນຜິວໜັງຂອງທ່ານ, ເຊັ່ນວ່າການຊຸດໂຊມຂອງຜິວໜັງຍ້ອນຄວາມກົດດັນຊຶ່ງສາມາດນຳພາໄປສູ່ຄວາມຫຍຸ້ງຍາກສັບສົນຮ້າຍແຮງເຊັ່ນວ່າການຕິດເຊື້ອໂຣກ ແລະ ແມ້ແຕ່ເຖິງການເສັຽຊີວິດ ເພາະສະນັ້ນແລ້ວການສົ່ງຕໍ່ໄປຫານາຍພະຍາບານເພື່ອຈະເຮັດການປະເມີນຜົນເບິ່ງຜິວໜັງແມ່ນຈຳເປັນຕ້ອງເຮັດ. ນາຍພະຍາບານຈະຕິດຕໍ່ໄປຫາທ່ານພາຍໃນຫ້າ (5) ມື້ເພື່ອຈະເຮັດໝາຍນັດການປະເມີນຜົນ. ຖ້າຫາກວ່ານາຍພະຍາບານບໍ່ສາມາດທີ່ຈະເຮັດໝາຍນັດພົບຫລັງຈາກຄວາມພະຍາຍາມສອງເທື່ອ ແລະ ຜູ້ໃຫ້ການປະຖົມພະຍາບານຂອງທ່ານບໍ່ເອົາການປະເມີນຜົນເບິ່ງສະພາບຂອງຜິວໜັງປັດຈຸບັນຂອງທ່ານໃຫ້ພະແນກ DDA, ຜູ້ຈັດການເອກສານຂອງທ່ານໄດ້ຖືກບົ່ງໃຫ້ທຳການສົ່ງຕໍ່ໄປຫາພະແນກ CPS ຫລື APS.

ເມື່ອເວລາບຸກຄົນຕົກຢູ່ໃນການສ່ຽງອັນຕະລາຍຂອງການຊຸດໂຊມຂອງຜິວໜັງຍ້ອນຄວາມກົດດັນ ມັນມີການບົວລະບັດອັນງ່າຍໆບາງຢ່າງຊຶ່ງສາມາດຖືກເອົາໃຫ້ໂດຍທ່ານເອງ, ຫລື ສຳລັບທ່ານ, ເພື່ອຈະໃຫ້ແນ່ໃຈວ່າຜິວໜັງຂອງທ່ານໃຫ້ຢູ່ຢ່າງແຂງແຮງ. ອັນນີ້ແມ່ນຄຳແນະນຳທົ່ວໄປບາງຢ່າງທີ່ຈະປະຕິບັດຕາມ. ນອກຈາກນັ້ນອີກ, ຖ້າຫາກວ່າທ່ານເຄີຍມີຄຳຖາມແນວໃດຈັກເທື່ອກ່ຽວກັບການບົວລະບັດຜິວໜັງຂອງທ່ານ, ຫລື ການປ່ຽນແປງໃນການປາກົດຕົວຂອງຂອງຜິວໜັງ, ທ່ານຄວນຈະໂທລະສັບໄປຫາທ່ານໝໍຂອງທ່ານ ຫລື ຜູ້ໃຫ້ການປິ່ນປົວພະຍາບານຂອງທ່ານໂດຍທັນທີໂລດ.

1. ຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອນຳການອາບນ້ຳ ຫລື ການບົວລະບັດສ່ວນຕົວ, ຈົ່ງຂໍໃຫ້ບຸກຄົນຜູ້ທີ່ຊ່ວຍເຫລືອທ່ານທີ່ຈະເບິ່ງບ່ອນທີ່ມີກະດູກຢູ່ໃນຮ່າງກາຍຂອງທ່ານເພື່ອຈະຊອກເບິ່ງການປ່ຽນແປງຕ່າງໆໃນສີຂອງຜິວໜັງ, ຄວາມເຈັບປວດ ຫລື ກິ່ນຂອງທ່ານ.
2. ຖ້າຫາກວ່າທ່ານສາມາດອາບນ້ຳເອງ, ຈົ່ງເບິ່ງຜິວໜັງຂອງທ່ານສຳລັບການປ່ຽນແປງຕ່າງໆໃນລະຫວ່າງການອາບນ້ຳຂອງທ່ານ, ສຳລັບການປ່ຽນແປງຕ່າງໆໃນສີຂອງຜິວໜັງ, ຄວາມເຈັບປວດ ຫລື ກິ່ນຂອງທ່ານ.
3. ຈົ່ງເວົ້າລົມນຳທ່ານໝໍ, ນາຍໝໍ ຫລື ຜູ້ໃຫ້ການປິ່ນປົວພະຍາບານຂອງທ່ານ. ຂໍໃຫ້ເຂົາເຈົ້າເບິ່ງຜິວໜັງຂອງທ່ານສຳລັບການປ່ຽນແປງ, ຖ້າຫາກວ່າທ່ານມີຄຳຖາມ ຫລື ຄວາມຂ້ອງໃຈແນວໃດ, ແລະ ຂໍເອົາຄຳແນະນຳຈາກເຂົາເຈົ້າວ່າຈະບົວລະບັດຜິວໜັງຂອງທ່ານໄດ້ແນວໃດ ຖ້າຫາກວ່າທ່ານມີຕຸ່ມເຈັບປວດຕ່າງໆ ຫລື ການປ່ຽນແປງອື່ນໆຕໍ່ຜິວໜັງຂອງທ່ານ.
4. ຈົ່ງໃຊ້ເອກສານການສຶກສາທີ່ຖືກຄັດມາພ້ອມນີ້ເພື່ອຈະຊ່ວຍເຫລືອໃຫ້ທ່ານເຂົ້າໃຈວ່າຈະບົວລະບັດຮັກສາຜິວໜັງຂອງທ່ານໄດ້ດີກວ່າເກົ່າໄດ້ແນວໃດ.

ຖ້າຫາກວ່າທ່ານມີຄຳຖາມກ່ຽວກັບລາຍລະອຽດອັນນີ້, ກະຣຸນາຕິດຕໍ່ໄປຫາ ໄດ້ທີ່ . ເຂົາເຈົ້າຈະສົ່ງທ່ານໄປຫານາຍໝໍ ຫລື ບ່ອນຊ່ວຍເຫລືອດ້ານສຸຂະພາບບ່ອນອື່ນເພື່ອລາຍລະອຽດເພີ້ມເຕີມ.

ດ້ວຍຄວາມຮັກແພງ,

DDA ຜູ້ຈັດການເອກສານ/ຊ່ວຍເຫລືອ

ສອດມານຳ